ASEAN AUSTRALIA SMART CITIES TRUST FUND
Asian Development Bank

Australian Government
Department of Foreign Affairs and Trade

ADB




# ກອງທຶນພັດທະນານະຄອນອັດສະລິຍະ ອາຊຽນ-ອົດສະຕຣາລີ - ແຜນງານການນະຄອນແບບມີການເຂົ້າຮ່ວມຂອງສັງຄົມ

**ຄວາມສະເໝີພາບຍິງ-ຊາຍ ແລະ ການເຂົ້າຮ່ວມຂອງສັງຄົມ (GESI) ແມ່ນບັນຫາປິ່ນອ້ອມສຳລັບກອງທຶນພັດທະນານະຄອນອັດສະລິຍະ ອາຊຽນ-ອົດສະຕຣາລີ (AASCTF). ໝາກຜົນຂອງ ຄວາມສະເໝີພາບຍິງ-ຊາຍ ແລະ ການເຂົ້າຮ່ວມຂອງສັງຄົມ ທີ່ກອງທຶນ ກຳລັງດຳເນີນງານ ແມ່ນແນ່ໃສ່ເພື່ອຮັບປະ ກັນວ່າ ການວາງແຜນຕົວເມືອງ, ການສະໜອງການບໍລິການ ແລະ ການຄຸ້ມຄອງດ້ານການເງິນ ແມ່ນໄດ້ຕອບສະໜອງຄວາມຕ້ອງການຂອງເພດຍິງ, ຜູ້ມີຄວາມບົກຜ່ອງທາງຮ່າງກາຍ, ເດັກນ້ອຍ, ຜູ້ເຖົ້າ ແລະ ສະມາຊິກຂອງກຸ່ມຄົນທີ່ໄດ້ຮັບການປະຕິບັດທີ່ບໍ່ເທົ່າທຽມ ແລະ ຜູ້ດ້ອຍໂອກາດ. ເພື່ອໃຫ້ມີໝາກຜົນຢ່າງແທ້ຈິງ, ກອງທຶນ AASCTF ແມ່ນໄດ້ສະເໜີແຜນງານ ນະຄອນແບບມີການເຂົ້າຮ່ວມຂອງສັງຄົມ.**

## ກອງທຶນ ແມ່ນຫຍັງ?

ກອງທຶນ AASCTF ຊ່ວຍໃຫ້ບັນດານະຄອນຂອງອາຊຽນໃນການປັບປຸງລະບົບການວາງແຜນ, ການສະໜອງການບໍລິການ ແລະ ການຄຸ້ມຄອງທາງການເງິນ ໂດຍການພັດທະນາ ແລະ ທົດສອບການແກ້ໄຂບັນຫາຂອງຕົວເມືອງດ້ວຍລະບົບດິຈິຕ້ອນ. ໃນການເຮັດວຽກຮ່ວມກັບບັນດານະຄອນຕ່າງໆ, ກອງທຶນ AASCTF ໄດ້ອຳນວຍຄວາມສະດວກການປ່ຽນແປງ ໃຫ້ກາຍເປັນນະຄອນໜ້າຢູ່, ທົນທານ, ແລະ ມີການເຂົ້າຮ່ວມ ໄປພ້ອມກັບການກຳນົດແນວທາງປະຕິບັດທີ່ດີທີ່ສຸດ ແລະ ແນວທາງໃນຕໍ່ໜ້າ ທີ່ສາມາດປັບຂະໜາດໄດ້ ແລະ ປະຕິບັດຊ້ຳ ຢູ່ບັນດານະຄອນຕ່າງໆໃນອາຊີ ແລະ ປາຊີຟິກ.

ກອງທຶນ AASCTF ແມ່ນໄດ້ຮັບທຶນສະໜັບສະໜູນຈາກລັດຖະບານປະເທດອົດສະຕຣາລີ ຜ່ານກົມການຕ່າງປະເທດ ແລະ ການຄ້າ (DFAT) ແລະ ຄຸ້ມຄອງໂດຍ ທະນາຄານພັດທະນາອາຊີ (ADB).

## ເປັນຫຍັງ ກອງທຶນ ຈຶ່ງຈັດຕັ້ງປະຕິບັດ ແຜນງານນະຄອນອັດສະລິຍະແບບມີການເຂົ້າຮ່ວມຂອງສັງຄົມ?

ໃນທົ່ວອາຊີ, ການກາຍເປັນຕົວເມືອງທີ່ໄວວາ ເປັນໂຕຂັບເຄື່ອນການເຕີບໃຫຍ່ທາງດ້ານເສດຖະກິດ ເຊິ່ງໃນເວລາດຽວກັນກໍເປັນສິ່ງທ້າທາຍທີ່ສຳຄັນ. ໃນບັນດານະຄອນ ໄດ້ມີການສະເໜີໂອກາດຫຼາຍຢ່າງເຊັ່ນ ໂອກາດໃນການເຮັດວຽກ ແລະ ການເຂົ້າເຖິງສິນຄ້າ ແລະ ການບໍລິການເພີ່ມຂຶ້ນ ແຕ່ປະໂຫຍດຂອງການດຳລົງຊີວິດຢູ່ໃນເມືອງພັດຖືກແຈກຢາຍບໍ່ສະເໝີພາບກັນ. ຕົວຢ່າງ, ຜູ້ຍິງແລະກຸ່ມຄົນດ້ອຍໂອກາດອື່ນ ແມ່ນຖືກປະຖິ້ມໄວ້ຂ້າງຫຼັງ ແລະ ໄດ້ຮັບປະໂຫຍດພຽງເຫຼັກໜ້ອຍ. ໄປພ້ອມກັບຄວາມທ້າທາຍນີ້ ໄດ້ມີການລະໂອກາດເພື່ອສ້າງຄວາມເຂົ້າໃຈ, ອຳນວຍຄວາມສະດວກໃນການເຊື່ອມຕໍ່ ແລະ ສ້າງແຮງຈູງໃຈ ໃຫແກ່ຜູ້ທີ່ມີອຳນາດຕັດສິນໃຈ ແລະ ພາກສ່ວນກ່ຽວຂ້ອງ ເພື່ອກະຕຸ້ນການເຕີບໃຫຍ່ຂອງຕົວເມືອງ ແບບມີການເຂົ້າຮ່ວມຂອງສັງຄົມ.

ຜ່ານການຄຸ້ມຄອງ ແລະ ນຳພາ ແລະ ການລິເລີ່ມການເຮັດວຽກຮ່ວມກັນ ໄດ້ມີການປັບໂຕຫຼາຍຂຶ້ນ, ເກີດມີການປ່ຽນແປງ ທີ່ສາມາດສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ກຸ່ມດ້ອຍໂອກາດ ແລະ ຜັກດັນໃຫ້ພົນລະເມືອງປະກອບສ່ວນເຂົ້າໃນການເຮັດໃຫ້ນະຄອນບໍ່ພຽງແຕ່ມີຄວາມອັດສະລິຍະຂຶ້ນ ແຕ່ເປັນຕາໜ້າຢູ່ຂຶ້ນ ສຳລັບຜູ້ຢູ່ອາໃສທັງໝົດ.

SCAN FOR DIGITAL VERSION

bit.ly/39uOFCh

## ນະຄອນອັດສະລິຍະ-ແຜນງານນະຄອນແບບມີການເຂົ້າຮ່ວມຂອງສັງຄົມ?

ຜ່ານການປຶກສາຫາລືຫຼາຍຄັ້ງກັບຜູ້ທີ່ມີບົດບາດສໍາຄັນຂອງນະຄອນ ທີ່ກໍາລັງປະຕິຮູບ ຫຼື ດ້ອຍບົດບາດໃນການຕັດສິນໃຈ, ແຜນງານພັດທະນານະຄອນອັດສະລິຍະແບບສັງຄົມເຂົ້າຮ່ວມ ຈະເປັນເວທີສໍາລັບການຮຽນຮູ້, ການແລກປ່ຽນ ແລະ ການເຂົ້າຮ່ວມຂອງພາກສ່ວນຕ່າງໆຈາກແຕ່ລະນະຄອນໃນພາກພື້ນ ເພື່ອການກໍານົດ ແລະ ສະໜັບສະໜູນການດໍາເນີນງານການວາງແຜນ ແລະ ຄຸ້ມຄອງນະຄອນໃຫ້ມີຄວາມເທົ່າທຽມຫຼາຍຂຶ້ນ. ໃນຕອນທ້າຍ, ແຜນງານຈະພັດທະນາຫຼັກສູດການຮຽນທາງອີເລັກໂທຣນິກຢູ່ໃນນະຄອນທີ່ມີການເຂົ້າຮ່ວມ ອີງໃສ່ເນື້ອໃນ ທີ່ມີການກໍານົດໃນກອງປະຊຸມຄົ້ນຄວ້າວິຊາການ. ຜົນຜະລິດນີ້ມີວັດຖຸປະສົງທີ່ຈະສະໜັບສະໜູນການຮຽນແບບຕໍ່ເນື່ອງ ແລະ ການເຜີຍແຜ່ໃນວົງກວ້າງ ໂດຍມີບັນດານະຄອນ, ຄູ່ຮ່ວມງານ ແລະ ຜູ້ສະໜັບສະໜູນເຂົ້າຮ່ວມ.

## ໝາກຜົນທີ່ຄາດຫວັງໄວ້ຂອງແຜນງານນະຄອນອັດສະລິຍະແບບສັມີການເຂົ້າຮ່ວມຂອງສັງຄົມມີຫຍັງແດ່?

ແຜນງານການພັດທະນານະຄອນອັດສະລິຍະແບບມີການເຂົ້າຮ່ວມຂອງສັງຄົມມຸ້ງຫວັງທີ່ຈະລິເລີ່ມ ແລະ ອໍານວຍຄວາມສະດວກໃຫ້ແກ່ການຮຽນຮູ້  ຂອງທຸກພາກສ່ວນກ່ຽວຂ້ອງຢ່າງກວ້າງຂວາງ ລວມມີພາກລັດ ແລະ ອົງການຈັດຕັ້ງບໍ່ຂຶ້ນກັບລັດຖະບານ ເພື່ອເພີ່ມຄວາມຮັບຮູ້ ແລະ ກະຕຸ້ນການດໍາເນີນວິທີການແກ້ໄຂບັນຫາດ້ວຍຫຼາຍວິທີ ທາງດ້ານກາຍຍະພາບ, ສັງຄົມ ແລະ ການເມືອງ ຂອງບັນດານະຄອນ ທີ່ສາມາດສົ່ງຜົນໃຫ້ເກີດມີການຍົກເວັ້ນ, ການຕັດສິດ ແລະ ການຈໍາແນກ ເມື່ອເຂົ້າໃຈຈາກທັດສະຂອງແມ່ຍິງ, ຄົນທີ່ມີຄວາມບົກຜ່ອງຂອງຮ່າງກາຍ ແລະ ກຸ່ມຄົນດ້ອຍໂອກາດອື່ນໆ.

### ໃນການເຂົ້າຮ່ວມມີຫຍັງແດ່?
### ຜ່ານບັນດາກິດຈະກໍາຕ່າງໆພາຍໃຕ້ແຜນງານນີ້:

- ພາກສ່ວນກ່ຽວຂ້ອງໃນການຄຸ້ມຄອງຕົວເມືອງ ທົ່ວພາກພື້ນ ໄດ້ເປັນເຄືອຂ່າຍດີກຂຶ້ນ;
- ພະນັກງານຂອງນະຄອນມີຄວາມເຂົ້າໃຈດີຂຶ້ນກ່ຽວກັບການຍົກເວັ້ນທາງສັງຄົມ ແລະ ວິທີແກ້ໄຂບັນຫາ ຜ່ານຍຸດທະສາດ ແລະ ການວາງແຜນ;
- ຜູ້ມີບົດບາດພາກສັງຄົມ ມີໂອກາດເຂົ້າຮ່ວມກັບພາກລັດ ໃນການແກ້ໄຂການຍົກເວັ້ນ ແລະ ຄວາມດ້ອຍໂອກາດ;
- ລັດ ແລະ ພາກສັງຄົມ ມີຄວາມຮັບຮູ້ ກ່ຽວກັບການປະຕິຮູບທາງດ້ານການເມືອງ ທີ່ເປັນໄປໄດ້ສໍາລັບນະຄອນທີ່ມີການເຂົ້າຮ່ວມ.

ນອກຈາກນັ້ນ ແຜນງານຈະສະແດງໃຫ້ເຫັນການລິເລີ່ມທີ່ກໍາລັງດໍາເນີນຢູ່ ແລະ ກໍາລັງຈະມາເຖິງ ເພື່ອເສີມສ້າງຄວາມເຂັ້ມແຂງໃນການເຂົ້າຮ່ວມຢູ່ບັນດານະຄອນ ແລະ ອໍານວຍຄວາມສະດວກໃຫ້ແກ່ໂອກາດການສ້າງເຄືອຂ່າຍ ທີ່ສະໜັບສະໜູນການລິເລີ່ມເຫຼົ່ານັ້ນ.

## ຂະບວນການເຂົ້າຮ່ວມເປັນຄືແນວໃດ?

- **ສິງຫາ-ຕຸລາ 2021**: ລະບຸພາກສ່ວນກ່ຽວຂ້ອງ ແລະ ແຜນທີ່ກໍານົດບັນຫາ
- **ຕຸລາ-ພະຈິກ 2021**: ເຊີນຜູ້ເຂົ້າຮ່ວມ
- **ພະຈິກ-ທັນວາ 2021**: ພັດທະນາເນື້ອໃນ
- **ມັງກອນ-ເມສາ 2022**: ຈັດຕັ້ງປະຕິບັດແຜນງານ
- **ກໍລະກົດ 2022**: ກິດຈະກໍາສຸດທ້າຍ
- **ກໍລະກົດ 2022**: ເຜີຍແຜ່ການຮຽນທາງອີເລັກໂທຣນິກ ກ່ຽວກັບນະຄອນທີ່ມີການເຂົ້າຮ່ວມຂອງສັງຄົມ

## ໃຜຈະເປັນຜູ້ອໍານວຍຄວາມສະດວກໃນແຜນງານ ການພັດທະນານະຄອນອັດສະລິຍະແບບມີການເຂົ້າຮ່ວມຂອງສັງຄົມ ?

RAMBOLL

The Asia Foundation

ແຜນງານຈະຖືກຈັດສົ່ງໂດຍ Ramboll (ຄູ່ຮ່ວມງານຂອງທະນາຄານພັດທະນາອາຊີ) ຮ່ວມກັບ The Asia Foundation. ແຜນງານໄດ້ພັດທະນາຈາກປະສົບການ ຂອງການເຂົ້າຮ່ວມ, ການສ້າງເຄືອຂ່າຍ ແລະ ການສ້າງຂີດຄວາມສາມາດ ທີ່ດໍາເນີນມາເຖິງຕອນນີ້ຂອງກອງທຶນ ເຊັ່ນດຽວກັບເນື້ອໃນຂອງຄວາມຮູ້ ໃນການເຂົ້າຮ່ວມ ແລະ ການຄຸ້ມຄອງຕົວເມືອງ  ທີ່ທາງ The Asia Foundation ສົ່ງມອບໃຫ້ທີມ.

**ທ່ານມີຄວາມສົນໃຈເຂົ້າຮ່ວມແຜນງານນະຄອນອັດສະລິຍະແບບມີການເຂົ້າຮ່ວມຂອງສັງຄົມບໍ?**
ລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆຂອງນະຄອນ ໝາຍທອງແດງ ຈາກກອງທຶນ AASCTF ອາດຈະລົງທະບຽນ ຄວາມສົນໃຈຂອງພວກເຂົາໃນການເຂົ້າຮ່ວມແຜນງານດັ່ງກ່າວ ໂດຍການສົ່ງອີເມວໄປຍັງ aasctf@adb.org. ເພື່ອອັບເດດເຫດການ ແລະ ກິດຈະກໍາຕ່າງໆ ຂອງກອງທຶນ ໃຫ້ສະແກນ QR code ຢູ່ບື້ເອງຂວາ ແລ້ວລົງທະບຽນອີເມວຂອງທ່ານ ຫຼື ຕິດຕາມການເຄື່ອນໄຫວຢູ່ໃນຊ່ອງສື່ສັງຄົມອອນລາຍຕ່າງໆ.

eepurl.com/g_U7ZD

AASCTF bit.ly/watchAASCTF @AASCTF @AASCTF